ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະການລົງທຶນ

ເລກທີ 2550 /ກຜທ.ຮມສ
ນະຄອນຫຼວງວຽງຈັນ, ວັນທີ 15 ຕຸລາ 2024

**<u>ໜັງສືເຊີນ</u>**

**ຮຽນ: ..............................................................................................................**

**..........................................................................................., ທີ່ນັບຖືຢ່າງສູງ**

**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມໂຕະມົນ ປະຈຳປີ 2024 ເຊິ່ງຈະຈັດຂຶ້ນໃນວັນທີ 14 ພະຈິກ 2024, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.**

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງແຜນການ ແລະ ການລົງທຶນສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 1630/ຫສນຍ, ລົງວັນທີ 20 ສິງຫາ 2024 ກ່ຽວກັບການເຫັນດີໃຫ້ຈັດກອງປະຊຸມໂຕມົນ ປະຈຳປີ 2024.

ກະຊວງແຜນການ ແລະການລົງທຶນ ໃນນາມຮອງປະທານ ທັງເປັນຜູ້ປະຈຳການຄະນະຊີ້ນຳລະດັບຊາດເພື່ອຂະບວນໂຕະມົນຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມໂຕະມົນປະຈຳປີ 2024 ພາຍໃຕ້ຫົວຂໍ້ "ເພີ່ມທະວີການເປັນຄູ່ຮ່ວມເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ" **ທີ່ຈະໄດ້ຈັດຂຶ້ນໃນວັນທີ 14 ພະຈິກ 2024, ເວລາ 08:30-16:30 ໂມງ, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ**. ຈຸດປະສົງຂອງກອງປະຊຸມແມ່ນເພື່ອ 1/ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດຜົນຂອງການທົບທວນກາງສະໄໝ ໃນທ້າຍສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ປະຈາປີ 2024 ແລະ ແຜນ 2025 ແລະ ການສ້າງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030); 2/ ບົດລາຍງານແຫ່ງຊາດແບບສະໝັກໃຈ ຄັ້ງທີ 3, ການຈັດຕັ້ງປະຕິບັດຍຸດທະສາດການຫລຸດພົ້ນອອກຈາກສະຖານະພາບການດ້ອຍພັດທະນາແບບໂລ່ງລ່ຽນ ຂອງ ສປປລາວ ແລະ ຜົນຂອງກອງປະຊຸມສຸດຍອດອາຊ່ຽນ ແລະ 3/ ລາຍງານວຽກງານການຮ່ວມມືເພື່ອການພັດທະນາ (ຜົນຂອງການສຳຫລວດສາກົນຄັ້ງທີ 4 ຂອງການເປັນຄູ່ຮ່ວມ ເພື່ອປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ແລະ ແຜນດຳເນີນງານຂອງຖະແຫລງການວຽງຈັນ 2016-2025).

ກອງປະຊຸມດັ່ງກ່າວໄດ້ຮັບກຽດເປັນປະທານໂດຍ ທ່ານ ປອ ເພັດ ພົມພິພັກ, ລັດຖະມົນຕີ ກະຊວງແຜນການ ແລະ ລົງທຶນ ແລະ ທ່ານ ບັກໂຄເດີຍ ເບີຄະນ໋ອຟ (Mr. Bakhodir Burkhanov), ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ພ້ອມທັງມີຜູ້ເຂົ້າຮ່ວມຂັ້ນ ຮອງລັດຖະມົນຕີ, ຮອງປະທານກຳມາທິການສະພາແຫ່ງຊາດ, ຮອງເຈົ້າແຂວງ, ຄະນະຫ້ອງການ, ຄະນະກົມຈາກບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ, ຄະນະພະແນກແຜນການ ແລະ ການລົງທຶນຈາກບັນດາແຂວງ ແລະ ນະຄອນຫລວງ, ບັນດາຄູ່ຮ່ວມພັດທະນາ ລວມທັງຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ສະພາການຄ້າ ແລະ

ອຸດສາຫະກຳ ພາຍໃນ ແລະຕ່າງປະເທດ ເຂົ້າຮ່ວມກອງປະຊຸມດັ່ງກ່າວ (ລາຍລະອຽດໄດ້ຂັດຕິດວາລະກອງປະຊຸມມາພ້ອມນີ້).

ຫວັງຢ່າງຍິ່ງວ່າ ທ່ານ ຈະພິຈາລະນາເຂົ້າຮ່ວມກອງປະຊຸມຄັ້ງນີ້ຕາມການເຊື້ອເຊີນ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ

<u>ໝາຍເຫດ:</u>

ເບີໂທຕິດຕໍ່

ທ. ສຸລິຍະ ຈັນສົມພູ

Tel: +856 20 98862184

ນ. ລັດດາວັນ ຕຸນາລົມ

Tel: +856 20 22228428

*QR code: ແບບຟອມລົງທະບຽນເຂົ້າຮ່ວມ ກອງປະຊຸມໂຕະມົນ ປະຈຳປີ 2024*

*QR code: ເອກະສານສຳຫັບກອງປະຊຸມ ໂຕະມົນ ປະຈຳປີ 2024*